Prince William County PUBLIC SCHOOLS
*Providing A World-Class Education*

LAO

ຮຽນພໍ່ແມ່/ຜູ້ປົກຄອງ:

ພວກເຮົາມີຄວາມດີໃຈທີ່ທ່ານແລະຄອບຄົວຂອງທ່ານເປັນສະມາຊິກຂອງຊຸມຊົນທີ່ມີຄວາມຫຼາກຫຼາຍຂອງພວກເຮົາ, ເຊິ່ງເປັນບ່ອນທີ່ຜູ້ຄົນເວົ້າຫຼາຍກວ່າໜຶ່ງຮ້ອຍພາສາແຕກຕ່າງກັນ.ໂຮງຮຽນລັດຖະບານ Prince William ເຈົ້າຊາຍວິນລຽມຂອງເທດສະບານໃຫ້ຄຳໝັ້ນສັນຍາຈະໃຫ້ *ການສຶກສາໃນລະດັບສາກົນ (World-Class Education)* ແກ່ນັກຮຽນທຸກຄົນ.

ໃນເມື່ອສະຖາບັນຄອບຄົວເປັນສິ່ງສຳຄັນໃນການດຳເນີນການ, ພວກເຮົາມີຄວາມຍິນດີທີ່ຈະ ມອບຂໍ້ມູນພື້ນຖານບາງສ່ວນເພື່ອຊ່ວຍໃຫ້ພໍ່ແມ່ແລະຜູ້ປົກຄອງທຸກຄົນເຂົ້າໃຈແລະປະກອບສ່ວນເຂົ້າໃນການສຶກສາ

ຂອງລູກຫຼານຂອງເຂົາເຈົ້າ.

ອຸປະກອນຂອງໂຮງຮຽນທັງໝົດແມ່ນມີໃຫ້ເປັນພາສາອັງກິດ; ເຖິງຢ່າງໃດກໍ່ຕາມ, ພວກເຮົາຈະສືບຕໍ່ແປເອກະສານທີ່ສຳຄັນແລະ ຂໍ້ມູນເປັນພາສາທີ່ຕ້ອງການຫຼາຍທີ່ສຸດ, ໃນເຂດພື້ນທີ່ຂອງພວກເຮົາ.

ຜູ້ທີ່ເວົ້າພາສາທີ່ຄົນໃຊ້ຫຼາຍກ່ວາໝູ່ສາມາດໄດ້ປະໂຫຍດຈາກຂໍ້ມູນທີ່ສຳຄັນແລະ ໄດ້ຮັບການປັບປຸງຢ່າງເປັນ ປົກກະຕິ ຈາກທັງເວັບໄຊຕ໌ pwcs.eduຂອງໂຮງຮຽນລັດຖະບານ Prince William ຂອງເທດສະບານ ແລະຂອງແຕ່ລະໂຮງຮຽນ.

DR. STEVEN L. WALTS
*Superintendent of Schools*

P.O. BOX 389, MANASSAS, VA 20108 • WWW.PWCS.EDU

ທັງໝົດນັ້ນມັກຈະໃຊ້ເຄື່ອງມືແປພາສາກູເກີລທີ່ທັນສະໄໝ (Google Translation), ເຊິ່ງແປພາສາແບບຈຳກັດໄດ້ຫຼາຍກ່ວາ 50 ພາສາ. ການແປພາສາຂອງຄອມພິວເຕີຣ໌ສ່ວນຫຼາຍແລ້ວຈະບໍ່ໄດ້ສົມບູນ, ແຕ່ກໍ່ຍັງສາມາດໃຫ້ເຂົ້າໃຈຂໍ້ມູນຂອງໂຮງຮຽນໄດ້. ຖ້າຫາກທ່ານບໍ່ມີຄອມພິວເຕີຣ໌ໃຊ້ໃນເຮືອນ, ທ່ານສາມາດໄປໃຊ້ຄອມພິວເຕີຣ໌ໃນຫ້ອງສະມຸດສາທາລະນະທົ່ວໄປ.

ສິ່ງທີ່ສຳຄັນທີ່ສຸດ,ພະແນກໂຮງຮຽນສະໜອງນາຍແປພາສາມືອາຊີບເພື່ອຊ່ວຍໃຫ້ຜູ້ທີ່ເວົ້າພາສາໃດໜຶ່ງໄດ້ດີທີ່ສຸດເຂົ້າໃຈເອ

ກະສານທີ່ມີຂໍ້ມູນສຳຄັນກ່ຽວກັບສິດທິຂອງນັກຮຽນແລະພໍ່ແມ່, ຄວາມຮັບຜິດຊອບ, ຄວາມຄາດຫວັງ,ແລະບັນຫາອື່ນໆທີ່ພົວພັນກັບໂຮງຮຽນແລະສິດຜົນປະໂຫຍດແລະການບໍລິການທີ່ນັກຮຽນສາມາດໄດ້ຮັບ.ນາຍແປພາສາສາມາດຊ່ວຍໃນກອງປະຊຸມຜູ້ປົກຄອງໃນບັນຫານີ້ເພື່ອຮັບຮອງວ່າການປະກອບສ່ວນຂອງໝົດທຸກຄົນຖືກນຳສະເໜີແລະເຂົ້າໃຈ. ການບໍລິການເຫຼົ່ານີ້ແມ່ນມອບໃຫ້ບັນດາຄອບຄົວໂດຍບໍ່ມີຄ່າໃຊ້ຈ່າຍ.

**ນຳໃຊ້ວິທີການເຫຼົ່ານີ້ເມື່ອທ່ານຕ້ອງການຄວາມຊ່ວຍເຫຼືອພິເສດ.**

- ອອນລາຍນ໌ - ໃຫ້ໄປທີ່ເວັບໄຊທ໌ translations.pwcs.edu
- ບຸກຄົນ- ໄປຢ້ຽມຢາມໂຮງຮຽນຂອງລູກທ່ານ. ມັນອາດຈະເກີດຂື້ນໄດ້ທີ່ຜູ້ທີ່ເວົ້າພາສາດຽວກັບທ່ານຈະບໍ່ຫວ່າງ. ເຖິງຢ່າງໃດກໍ່ຕາມພະນັກງານຜູ້ນຶ່ງຈະໃຊ້ໂປສເຕີຣ໌ ເພື່ອຊ່ວຍເຫຼືອທ່ານ.

ໃນທຸກກໍລະນີ, ທ່ານຈະຖືກຮ້ອງຂໍໃຫ້ສະໜອງຂໍ້ມູນດັ່ງຕໍ່ໄປນີ້:

  - ຊື່ຂອງທ່ານແລະຊື່ລູກຂອງທ່ານ;
  - ໂຮງຮຽນຂອງລູກທ່ານ, ຊັ້ນຮຽນ, ແລະຊື່ຂອງຄູ;
  - ທ່ານຕ້ອງການສົນທະນາສ່ວນຕົວກັບ (ຊື່ຫຼືອາຊີບ), ແລະຫົວຂໍ້ຂອງການສົນທະນາ; ແລະ
  - ໝາຍເລກໂທລະສັບແລະເວລາທີ່ດີທີ່ສຸດທີ່ສາມາດໂທຫາທ່ານໄດ້.

- ຖ້າຫາກລູກຂອງທ່ານເອົາຈົດໝາຍຈາກໂຮງຮຽນກັບໄປບ້ານ
  ເພື່ອຮຽກຮ້ອງໃຫ້ເຂົ້າປະຊຸມ; ຫຼືວ່າທ່ານຕ້ອງການ
  ຈັດໃຫ້ມີການສົນທະນາກັບຄູຫຼືພະນັກງານຂອງໂຮງຮຽນຜູ້ອື່ນ,
  ໃຫ້ໃຊ້ວິທີການຂ້າງເທິງເພື່ອຮ້ອງຂໍເອົານາຍແປພາ
  ສາມາຊ່ວຍໃນການສົນທະນາທີ່ສຳຄັນເຫຼົ່ານີ້.
  ຈະມີຄົນຕິດຕໍ່ກັບຫາທ່ານໄວເທົ່າທີ່ຈະເປັນໄປໄດ້.

ການເຂົ້າຮ່ວມຂອງທ່ານສາມາດສ້າງຄວາມແຕກຕ່າງໄປໃນທາງບວກຕໍ່ການສຶກສາຂອງລູກທ່ານ, ແລະພວກເຮົາມີຄວາມກະຕືລືລົ້ນທີ່ຈະໃຫ້ການຊ່ວຍເຫຼືອທ່ານດ້ວຍການບໍລິການເຫຼົ່ານີ້.ພວກເຮົາຫວັງວ່າຈົດໝາຍສະບັບນີ້ຈະເປັນເຄື່ອງສື່ສານຍ່າງຊັດເຈນຈາກໂຮງຮຽນລັດຖະບານPrince Williamຂອງເທດສະບານໃຫ້ແກ່ທ່ານແລະລູກຫຼານຂອງທ່ານ. ຂ້າພະເຈົ້າມີຄວາມໝັ້ນໃຈວ່າທ່ານແບ່ງປັນຄວາມປາຖະຫນາດີຂອງພວກເຮົາໃຫ້ແກ່ນັກຮຽນທຸກຄົນເພື່ອວ່າຈະໄດ້ຮັບການສຶກສາລະດັບສາກົນ (World-Class Education).

ດ້ວຍຄວາມນັບຖື,



ດຣ.ສຕີເວັນວອ່ສ (Dr. Steven Walts)
ອຳນວຍການຂອງໂຮງຮຽນ (Superintendent of Schools)

*ໃນເວລາທີ່ເຂົ້າເບິ່ງເວັບໄຊທ໌ pwcs.edu, ໃຫ້ຊອກຫາໜ່ວຍໂລກທີ່ມີສີສັນສວຍງາມ ເພື່ອເຂົ້າຫາໜ້າທີ່ມີຂໍ້ຄວາມທີ່ອະທິບາຍຂໍ້ຄວາມນີ້.